# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 13 ມີຖຸນາ 2010 (6-13-2010)

---

# ໃນເມື່ອສາສນາພາໃຫ້ລົ້ມເຫຼວ

**ຂໍ້ພຣະຄັມພີໃນບົດຮຽນ:** 1 ຊາມູເອນ 4:3-5,10, 20-22; 5:1-4; 6:19-21

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນນີ້ສາມາດຊ່ວຍໃຫ້ທ່ານຮັບຮູ້ການຂອບຄຸນຄວາມສົມບູນບໍຣິສຸດຂອງພຣະເຈົ້າຂຶ້ນມາໃໝ່ ແລະ ສືບຕໍ່ການອຸດທິດຕົນກັບພຣະເຈົ້າຜູ້ຊົງພຣະຊົນຢູ່ຂຶ້ນມາໃໝ່. ການນີ້ຈະນຳທ່ານຜ່ານກາຍຄວາມເຊື່ອທາງສາສນາຈົນ ເຖິງຄວາມຈິງ ແລະເຖິງພຣະເຈົ້າຜູ້ຊົງພຣະຊົນມີຊີວິດ.

### ເປົ້າໝາຍຂອງບົດຮຽນ

ບົດຮຽນນີ້ ແມ່ນກ່ຽວກັບການເສັຽຊັຍຂອງພວກຊາວອິສຣາເອັນ ແລະການສູນຫາຍຂອງຫີບພຣະສັນຍາ ຫລັງຈາກທີ່ພວກເຂົາເຂົ້າໃຈຜິດສລູບຜົນວ່າການທີ່ມີຫີບພຣະສັນຍາຢູ່ນຳນັ້ນ ຈະຊ່ວຍໃຫ້ພວກເຂົາຮັບຊັຍຊະນະ.

### ຄວາມສຳຄັນຂອງບົດຮຽນ

ຄົນສ່ວນຫລາຍມັກຈະໄວ້ວາງໃຈໃນສາສນາ ຫລາຍກວາໄວ້ໄວວາງໃຈໃນພຣະເຈົ້າ.

**ການສຶກສາພຣະຄັມພີ**

ຢູ່ບາງບ່ອນໃນໂລກນີ້, ຄວາມເວົ້າຂອງສາສນາສຳຄັນກ່ວາຄວາມສັມພັນຂອງຜູ້ນະມັສການພຣະເຈົ້າ. ການກະຕຸ້ນຈິດໃຈໃຫ້ເຊື່ອໃນສາສນາມີຢູ່ທົ່ວໄປ, ທຸກໆວັນອາທິດຄົນບາງກຸ່ມກໍອ່ອນໄຫວໄປ ຕາມແຮງກົດດັນຂອງສາສນາປາສຈາກການປະສົບກັບການສະຖິດຢູ່ນຳຂອງພຣະເຈົ້າ.

ພວກຊາວອິສຣາເອັນໄດ້ຮ່ຳຮຽນຈາກບົດຮຽນອັນເຈັບແສບວ່າ ສາສນາບໍ່ສາມາດເປັນສິ່ງທີ່ແທນຄວາມສັມພັນກັບພຣະເຈົ້າໄດ້. ຫລັງຈາກທີ່ໄດ້ຖືກເສັຽຊັຍໃຫ້ພວກຊາວຟີລິສຕິນແລ້ວ ພວກເຂົາໄດ້ວາງແຜນນຳເອົາຫີບພຣະສັນຍາມາຢູ່ໃນສນາມຮົບນຳ ຫວັງວ່າຫີບນັ້ນຈະປົກປ້ອງຮັກສາພວກເຂົາ. ພວກເຂົາໄດ້ຮຽນຮູ້ຢ່າງວ່ອງໄວໃນຄວາມແຕກຕ່າງລະຫວ່າງການໄວ້ວາງໃຈໃນຫີບພຣະສັນຍາ ກັບການໄວ້ວາງໃຈໃນພຣະເຈົ້າ.

1. <u>ໄວ້ວາງໃຈໃນຜິດບ່ອນ</u>**:** 1 ຊາມູເອນ 4:3-5, 10

ຫລັງຈາກພວກອິສຣາເອັນເສັຽນັກຮົບເຖິງ 4000 ຄົນໃນການສູ້ຮົບກັບພວກຟີລິສຕິນແລ້ວ, ພວກຜູ້ແກ່ຂອງ

ຊາວອິສຣາເອັນກໍເລີ່ງສເນີໃຫ້ພວກເຂົານໍາເອົາຫີບພຣະສັນຍາໄປໃນສນາມຮົບນໍາເພື່ອໃຫ້ແນ່ໃຈວ່າພຣະເຈົ້າສະຖິດຢູ່ນໍາພວກເຂົາ. ແຕ່ແລ້ວຫີບນັ້ນບໍ່ໄດ້ເປັນເໝືອນເຄື່ອງຮັກສາປ້ອງກັນຜີສໍາລັບພວກເຂົາ.

ພວກຄົນໄດ້ສົ່ງກຸ່ມຜູ້ຊາຍຈາກເມືອງຊີໂລເພື່ອນໍາເອົາຫີບພຣະສັນຍາໄປສນາມຮົບ. ລູກຊາຍ ຂອງທ່ານ ເອລີ ຊື່ ໂຮບນີ ແລະ ຟີເນຮາ ຜູ້ທີ່ໄດ້ທໍາຄວາມບາບຜິດສິນທັມທາງເພດກັບຜູ້ຍິງທີ່ຮັບໃຊ້ຢູ່ໃນວິຫານ (1 ຊມອ 2:22) ກໍຮ່ວມເດີນນໍາທາງໄປ. ຖ້າພວກຄົນໄດ້ຖາມພຣະເຈົ້າກ່ອນ, ພວກເຂົາຈະບໍ່ອະນຸຍາດໃຫ້ສອງຄົນທີ່ທໍາຄວາມຊົ່ວຕໍ່ແທ່ນບູຊາຂອງພຣະເຈົ້ານໍາທາງໄປກັບຫີບພຣະສັນຍາຈັກເທື່ອ.

ພວກຄົນຫັນໜ້າເຂົ້າຫາພຣະເຈົ້າເພາະວ່າພວກເຂົາໄດ້ຮັບຄວາມເສັຽຊັຍ ແລະພວກເຂົາຕ້ອງການຊັຍຊະນະ. ພວກເຂົາບໍ່ຢ້ານຢໍາເກງພຣະເຈົ້າ ຫຼື ຕ້ອງການໃຫ້ພຣະອົງສະຖິດຢູ່ນໍາ, ແຕ່ພວກເຂົາຢາກໄດ້ບາງຢ່າງຈາກພຣະອົງ. ພຣະເຈົ້າບໍ່ແມ່ນຜູ້ທີ່ພວກເຮົາສາມາດບັງຄັບບັນຊາໄດ້ ດ້ວຍການໃຊ້ເຄື່ອງໝາຍທາງສາສນາ. ການຮັບສິນບັບຕິສມາບໍ່ສາມາດເອົາມາໃຊ້ແທນຄວາມປ່ຽນແປງສ່ວນຕົວໄດ້. ບາງຄັ້ງການຮັບສິນບັບຕິສມາເປັນເຄື່ອງໝາຍທີ່ຄົນໄວ້ວາງໃຈເຊື່ອ ແທນທີ່ຈະໄວ້ວາງໃຈໃນພຣະເຈົ້າ--ແຕ່ກໍຍັງເປັນສິ່ງທີ່ເໜືອເຄື່ອງໝາຍຢູ່. ບາງຄົນກໍໄວ້ວາງໃຈໃນສິດຍາພິບານ, ໂບດ, ຫຼື ໄມ້ກາງແຂນ. ເຄື່ອງໝາຍເຫຼົ່ານີ້ໄດ້ຊີ້ໄປຫາພຣະເຈົ້າທີ່ພວກເຮົາສາມາດໄວ້ວາງໃຈໄດ້ ແຕ່ມັນບໍ່ສາມາດເປັນສິ່ງທີ່ເອົາມາແທນພຣະເຈົ້າໄດ້.

ເວລາທີ່ພວກເຮົາບໍ່ໄວ້ວາງໃຈໃນພຣະເຈົ້າ ພວກເຮົາກໍຕ້ອງພົບກັບການເສັຽຊັຍແນ່ນອນ. ເຖິງແມ່ນພວກຄົນໂຫ່ຮ້ອງຈົນແຜ່ນດິນສນັ່ນຫວັ່ນໄຫວ, ພຣະເຈົ້າບໍ່ໄດ້ສູ້ຮົບເພື່ອພວກເຂົາເພາະວ່າຍ້ອນມີຫີບພຣະສັນຍາຢູ່ນໍາທີ່ນັ້ນ. ພວກຟີລິສຕິນໄດ້ຍິນສຽງໂຫ່ຮ້ອງຂອງທະຫານ ແລະມີຄວາມຢ້ານຕົກໃຈສໍາລັບຊີວິດ. ພວກເຂົາຄິດວ່າພຣະເຈົ້າຂອງຊາວອິສຣາເອນໄດ້ເຂົ້າມາໃນຄ້າຍຂອງເຂົາ ແຕ່ຢ່າງໃດກໍຕາມ ພວກຟີລິສຕິນຍັງໄດ້ຂ້າທະຫານອິສຣາເອນເຖິງ 30,000 ຄົນ. ຫີບພຣະສັນຍາກໍຕົກໄປຢູ່ໃນເງື້ອມມືຂອງພວກຟີລິສຕິນ ແລະ ປະໂຣຫິດຜູ້ຊົ່ວຊ້າ ໂຮບນີ ແລະ ຟີເນຮາກໍຕາຍໄປ. ຜູ້ຄົນໄດ້ໄວ້ວາງໃຈໃນສາສນາ ແທນທີ່ຈະໄວ້ວາງໃຈໃນພຣະເຈົ້າຜູ້ຊົງມີຊີວິດເປັນຢູ່.

## 2. <u>ພຣະເຈົ້າຊົງບໍ່ສຖິດຢູ່ນໍາພວກເຂົາ</u>: 1 ຊາມູເອນ 4:20-22

ຜົນຂອງຄວາມເສັຽຊັຍຂອງອິສຣາເອນໃຫ້ແກ່ຟີລິສຕິນໄດ້ເຮັດໃຫ້ທຸກຄົນເສັຽຂວັນໜັກ, ທະຫານຄົນນຶ່ງໄດ້ໜີລອດມາບອກຂ່າວຮ້າຍແກ່ທ່ານ ເອລີ. ທ່ານໄດ້ຖາມເຖິງລູກຊາຍຂອງຕົນ ກໍປາກົດວ່າພວກເຂົາໄດ້ຕາຍໃນສນາມຮົບແລ້ວ. ຂ່າວຮ້າຍນີ້ໄດ້ພາໃຫ້ທ່ານ ເອລີ ໄດ້ຕົກລົງຈາກຕັ່ງທີ່ທ່ານນັ່ງຢູ່ປະຕູເມືອງ ຄໍຫັກຕາຍ. ທ່ານ ເອລີ ແລະລູກຊາຍໄດ້ຮັບບົດຮຽນຕີສອນຈາກພຣະເຈົ້າທີ່ໄດ້ສັນຍາໄວ້.

ສ່ວນເມັຽຂອງ ຟີເນຮາ ກໍເໝືອນກັນ ເມື່ອໄດ້ຍິນຂ່າວຮ້າຍກໍຕົກໃຈ ເກີດລູກຊາຍແລະຕອມໃຈຕາຍຫລັງຈາກໃສ່ຊື່ລູກຊາຍວ່າ ອີຄາໂບດ ທີ່ໝາຍຄວາມວ່າ “ຣັສມີໄດ້ຈາກໄປແລ້ວ”. ນາງຄິດວ່າການຕາຍຂອງພໍ່ປູ່, ຜົວ, ແລະ ອ້າຍຂອງຜົວໝາຍເຖິງ ຣັສມີຂອງພຣະເຈົ້າໄດ້ຖືກຍົກອອກຈາກໄພ່ພົນຂອງພຣະອົງ. ຫີບພຣະສັນຍາທີ່ຄວນຕັ້ງຢູ່ໃນໃຈກາງຂອງຄ້າຍຫລາຍກວ່າຢູ່ໃນສນາມຮົບ ກໍຕົກຢູ່ໃນກໍາມືຂອງພວກຟີລິສຕິນ, ຣັສມີຂອງພຣະເຈົ້າໄດ້ຈາກພວກອິສຣາເອນໄປແລ້ວ.

ພຣະຣັສມີຂອງພຣະເຈົ້າເປັນນໍ້າໜັກຂອງການສະຖິດນໍາພາ, ການຮັກສາ, ແລະການລ້ຽງດູຊີວິດຂອງພວກເຮົາ. ທີ່ຈະບອກວ່າໄດ້ຮັບຣັສມີອັນໃດໃນຊີວິດຂອງຄົນຜູ້ນຶ່ງ, ເຮົາຕ້ອງບອກວ່າອັນໃດມີນໍ້າໜັກກວ່າ. ການຕິດຕາມເຄື່ອງສມັຍໃໝ່ ຫຼື ສິ່ງທີ່ພຣະເຈົ້າກໍາລັງເຮັດຢູ່ໃນໂບດ, ອັນໃດມີນໍ້າໜັກກວ່າກັນ? ຜູ້ຊະນະຂອງການແຂ່ງຂັນເຕະ

ບານ ຫຼື ການມີຄົນໃໝ່ຮັບເຊື່ອພຣະຄຣິດ ອັນໃດມີນ້ຳໜັກສຳລັບທ່ານເອງ?

**3. ຖືຄວາມບໍຣິສຸດເປັນສິ່ງທຳມະດາທົ່ວໄປ:** 1 ຊາມູເອນ 5:1-4; 6:19-21

ແນ່ນອນ ພວກຟີລິສຕິນບໍ່ໄດ້ເອົາໃຈໃສ່ຮັບໃຊ້ຖືພຣະເຈົ້າວ່າບໍຣິສຸດເວລາຫີບພຣະສັນຍາໄດ້ເຂົ້າໄປຢູ່ໃນຄ້າຍຂອງພວກເຂົາ. ພວກເຂົາໄດ້ເອົາຫີບພຣະສັນຍາຈາກເມືອງ ເອເບນເອເຊ ໄປຫາເມືອງ ອາສແດດ, ເປັນນຶ່ງໃນຫ້າເມືອງສຳຄັນຂອງພວກຟີລິສຕິນ. ພວກເຂົາໄດ້ເອົາຫີບພຣະສັນຍາແຫ່ສເລີມສລອງຊັຍຊະນະຂອງເຂົາໄປຕາມເມືອງພ້ອມກັນກັບພຣະເຈົ້າຂອງເຂົາ. ພຣະອົງນຶ່ງຂອງເຂົາຊື່ວ່າ ພຣະດາກົງ, ພໍ່ຂອງພຣະບາອານ. (ພຣະບາອານເປັນສູນກາງພຣະເຈົ້າຂອງພວກຄົນການາອານ).

ພຣະດາກົງບໍ່ສາມາດຢືນຄົງຢູ່ຕໍ່ໜ້າພຣະພັກຂອງພຣະເຈົ້າ, ເວລາເຂົາເອົາຫີບພຣະສັນຍາວາງໄວ້ໃນວິຫານຂອງພວກເຂົາ ພຣະດາກົງກໍລົ້ມຂວັ້ມໜ້າຕົກລົງພື້ນຕໍ່ໜ້າຫີບພຣະສັນຍາຂອງພຣະເຈົ້າ. ພວກຟີລິສຕິນຄິດວ່າເປັນອຸປຕິເຫດ ກໍຍົກຮູບປັ້ນຄືນໄວ້ແທ່ນຂອງມັນ. ຕອນເຊົ້າຂອງມື້ຕໍ່ມາພຣະດາກົງກໍໄດ້ຕົກລົງອີກ, ແຕ່ຄັ້ງນີ້ ຫົວແລະມືກໍຫັກອອກຈາກຮ່າງກາຍ. ພວກຟີລິສຕິນໄດ້ຖືຮັກສາສິ່ງສັກສິດເໝືອນສິ່ງທັມມະດາ ແລະ ຖືສິ່ງທັມມະດາເໝືອນສິ່ງສັກສິດ. ການນີ້ຄວນເຕືອນສອນໃຫ້ເຂົາເຫັນວ່າພວກເຂົາສັບສົນກ່ຽວກັບທັງສອງແນວນີ້.

ຫລັງຈາກນັ້ນພວກຟີລິສຕິນກໍຍ້າຍຫີບພຣະສັນຍາໄປຕາມເມືອງຕ່າງໆ, ແຕ່ລະຄັ້ງຫີບນັ້ນກໍໄດ້ນຳເອົາໂຊກຮ້າຍມາສູ່ໄພ່ພົນຂອງເຂົາ ເພາະເຂົາຖືສິ່ງສັກສິດເປັນທັມມະດາ. ພວກຟີລິສຕິນເກີດຄວາມຢ້ານຕໍ່ຫີບນັ້ນ ແລະພວກເຂົາກໍສ້າງລົ້ກວຽນອັນໃໝ່ໃສ່ຫີບ ແລະສົ່ງຄືນໄປໃຫ້ພວກອິສຣາເອນ. ພວກເຂົາບໍ່ຕ້ອງການມີສ່ວນກ່ຽວກັບຄວາມສັກສິດບໍຣິສຸດຂອງພຣະເຈົ້າອີກຕໍ່ໄປ.

ເວລາຫີບພຣະສັນຍາ ມາຮອດເມືອງ ເບັດຊາເມສ ເຂດແດນຂອງອິສຣາເອນ, ຄົນຖິ່ນນັ້ນກໍເຮັດແບບດຽວກັນກັບພວກຟີລິສຕິນ. ພວກເຂົາເບິ່ງເຂົ້າໄປໃນຫີບເພາະຢາກຮູ້ຢາກເຫັນວ່າມີຫຍັງແດ່ຢູ່ໃນຫີບນັ້ນ, ຄວາມຢາກເຫັນລ່ວງເກີນຄວາມບໍຣິສຸດສັກສິດໃນເວລານັ້ນ. ຜົນທີ່ໄດ້ຮັບກໍຄື ມີຜູ້ຊາຍລົ້ມຕາຍລົງຢ່າງກະທັນຫັນທີເຖິງ 70 ຄົນ.

ພວກເຮົາຕ້ອງການພົບກັບຄວາມບໍຣິສຸດຂອງພຣະເຈົ້າຢ່າງສົດໆຮ້ອນໆ. ພວກເຮົາເນັ້ນໜັກການຢູ່ໃກ້ຂອງພຣະເຈົ້າ ແລະຄວາມຮັກຂອງພຣະອົງສຳລັບພວກເຮົາເທົ່າທີ່ຄວນຈະທຳ ໃນພຣະຄັມພີກໍໄດ້ກ່າວເຖິງເໝືອນກັນ. ເຖິງຢ່າງໃດກໍຕາມ, ພຣະຄັມພີຍັງໄດ້ເນັ້ນໜັກອີກວ່າພຣະເຈົ້າບໍຣິສຸດ ແລະມີຄ່າສູງສົມຄວນໄດ້ຮັບການສັຣເສີນ ແລະຍົກຍ້ອງຈາກພວກເຮົາ. ພວກເຮົາບໍ່ຄວນຖືວ່າພຣະເຈົ້າເປັນສ່ວນປະກອບໃນຊີວິດຂອງເຮົາ; ພຣະອົງເປັນຊີວິດຂອງເຮົາ. ພວກເຮົາບໍ່ຄວນຂາບໄຫວ້ການນະມັສການເໝືອນບາງຄົນທີ່ຕິດແທດຢູ່ກັບຊະນິດວິທີ ຫຼືແບບແຜນຂອງການນະມັສການ. ພວກເຮົາຮັກສາການນະມັສການຖວາຍໃຫ້ກັບພຣະເຈົ້າ.

## ບົດຮຽນຊີວິດ:

ມີຫລາຍຄົນພຍາຍາມຕິດຕາມສາສນາແຕ່ບໍ່ໄດ້ຜົນ. ຊີວິດບໍ່ໄດ້ຢູ່ໃນການນະມັສການຂອງພຣະເຈົ້າ ແຕ່ຢູ່ໃນພຣະເຈົ້າທີ່ເຮົານະມັສການ. ເວລາທີ່ສາສນາລົ້ມເຫຼວ, ພວກເຮົາຄວນຮູ້ວ່າມີຄວາມແຕກຕ່າງລະຫວ່າງເຄື່ອງໝາຍ

ນອກກາຍຂອງການນະມັສການ ແລະພຣະເຈົ້າທີ່ເປັນຈິງແລະມີຊີວິດຢູ່. ແທນທີ່ຈະໄວ້ວາງໃຈໃນໂບດ, ສິດຍາພິບານ, ຫຼືຄວາມດົ້ນຮົນທາງສາສນາ, ພວກເຮົາຄວນໄວ້ວາງໃຈໃນພຣະເຈົ້າ.

ມີຫຍັງແດ່ທີ່ສາມາດຊ່ວຍເຮົາໃຫ້ເຊົາໄວ້ວາງໃຈໃນສາສນາ ແລະຫັນມາໄວ້ວາງໃຈໃນພຣະຄຣິດ?

- ພວກເຮົາຄວນເອົາຄວາມໄວ້ວາງໃຈຂອງເຮົາໄວ້ໃນພຣະເຈົ້າ ຫຼາຍກວ່າເປືອກນອກຂອງສາສນາ.
- ຖ້າວ່າພວກເຮົາບໍ່ລະມັດລະວັງກັບຄວາມບໍຣິສຸດຂອງພຣະເຈົ້າ, ນໍ້າໜັກຂອງການສຖິດຂອງພຣະເຈົ້າຈະບໍ່ມາຢູ່ກັບຊີວິດຂອງເຮົາ, ແລະພວກເຮົາອາດຈະປະເຊີນໜ້າກັບການຕີສອນຂອງພຣະອົງເພື່ອນຳເອົາພວກເຮົາກັບຄືນສູ່ບ່ອນທີ່ພວກເຮົາຄວນຢູ່.
- ພວກເຮົາບໍ່ຄວນຈະມີຄວາມຢູ່ສຸກສບາຍຕໍ່ສິ່ງທີ່ກ່ຽວກັບພຣະເຈົ້າແລະຖືວ່າບໍ່ສຳຄັນ ຫຼືໃຊ້ຊີວິດແບບງ່າຍໆເດີນໄປຕາມແບບລົມພັດໄປຕາມກະແສການເດີນຕາມພຣະເຈົ້າ.

ເຮືອບິນໂດຍສານມີເຄື່ອງເດີນອັດຕະໂນມັດເພື່ອຊ່ວຍບັງຄັບເຄື່ອງບິນ ໃນເມື່ອເຮືອນບິນຂຶ້ນໄປບິນຢູ່ເທິງອາກາດ ແລະຢູ່ໃນຄວາມສູງທີ່ຖືກຕ້ອງ. ພວກນັກບິນກໍເປີດໃສ່ເຄື່ອງອັດຕະໂນມັດໃຫ້ບັງຄັບເຮືອບິນ ແລະກໍພັກຜ່ອນໂດຍບໍ່ຕ້ອງເຮັດຫຍັງກ່ຽວກັບການຂັບເຄື່ອງບິນເລີຍ.

ພວກເຮົາກໍເໝືອນກັນ, ພວກເຮົາມີ "ເຄື່ອງບັງຄັບອັດຕະໂນມັດ" ເມື່ອເວົ້າເຖິງຄວາມສັມພັນກັບພຣະເຈົ້າ. ພວກເຮົາເອົາຈິດໃຈຂອງເຮົາໄວ້ກັບເຄື່ອງອັດຕະໂນມັດ ແລະປ່ອຍຕົວເອງໄປຕາມຄວາມເຄື່ອນໄຫວໃນການນະມັສການພຣະເຈົ້າ ຫຼືການຮັບໃຊ້ພຣະເຈົ້າ, ມັນແຕກຕ່າງກັນກັບການທີ່ເຮົາເອົາຕົວເຮົາເຂົ້າຮ່ວມຢ່າງເຕັມປ່ຽມຢູ່ໃນຄວາມສຳພັນກັບພຣະເຈົ້າຢ່າງແທ້ຈິງ. ພວກເຮົາຈຳເປັນຕ້ອງນະມັສການພຣະເຈົ້າ ແລະ ບໍ່ແມ່ນນະມັສການສາສນາ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BS